ສຳນັກງານໃຫຍ່ ເລກທີ: 011 /ທຄຕລ.2020

ນະຄອນຫຼວງວຽງຈັນ, ວັນທີ: 29 JAN 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ຢູ່ໃນນະຄອນຫລວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ F5 load balancer ຈຳນວນ 04 ເຄື່ອງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບວ່າ ທະນາຄານຂອງພວກເຮົາມີຄວາມຕ້ອງການອຸປະກອນໄອທີ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ F5 load balancer ຈຳນວນ 04 ເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສະເປັກ | ຈຳນວນ |
|---|---|---|---|
| 1 | F5 Load balancer | - BIG-IP i5800 Local Traffic Manager (48GB Memory, SSD, Max SSL, Max Compression, vCMP) | 4 |
| | | - Level1 Premium Service for BIG-IP (7x24) | 4 |
| | | - 2 x BIG-IP Single AC Power Supply for i5x00 (650W, Field Upgrade) | 4 |
| | | - 8 x BIG-IP & VIPRION SFP+ 10GBASE-SR Transceiver (Short Range, 300m, Field Upgrade) | 4 |
| | | - Training advance course for 2 people | |

1. **ເງື່ອນໄຂຂອງບໍລິສັດ, ຫ້າງຮ້ານຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້ :**

- **ບັນຈຸໃສ່ຊອງທີ່1(ບໍ່ປິດຊອງ):** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ, ໃບຢັ້ງຢືນເຄື່ອງໄອທີປີທີຜະລິດສິນຄ້າ(SERIES), ປະເທດທີ່ຜະລິດ, ລະບຸໄລຍະເວລາໃນການຮັບປະກັນ ແລະ ຜົນງານຂອງບໍລິສັດຫ້າງຮ້ານຜ່ານມາຢ່າງໜ້ອຍປະສົບການ 03 ປີຂຶ້ນໄປ (ບົດລາຍງານ). ກຳນົດຍື່ນຊອງມາດຕະຖານເຕັກນິກບໍ່ໃຫ້ກາຍວັນທີ 11/02/2020 ໃນໂມງລັດຖະການທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການ ຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

- **ບັນຈຸໃສ່ຊອງທີ່2(ປິດຊອງ):** ໃບສະເໜີລາຄາ ( ຕ້ອງກຳນົດເປັນເງິນກີບລວມອາກອນ )
  - ໃບສະເໜີລາຄາໃຫ້ລະບຸມູນຄ່າຍອດລວມໃຫ້ຄົບຖ້ວນ.
  - ໃນວັນທີ 11/02/2020 ທຄຕລ ຈະເປີດຊອງປະມູນຮ້ານຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ແລະ ສົ່ງຜູ້ຕາງໜ້າເຂົ້າຮ່ວມ, ເຊິ່ງເວລາແມ່ນຈະໄດ້ແຈ້ງຕາມພາຍຫຼັງ.

2. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ກັບຜູ້ສະໜອງທີ່ຊະນະການປະມູນ, ການຊຳລະຈະແບ່ງອອກເປັນ 03 ງວດດັ່ງນີ້:**
   - <u>ງວດທີ1:</u> ຊຳລະລ່ວງໜ້າ 20% ຂອງມູນຄ່າພາຍຫລັງເຊັນສັນຍາທັງສອງຝ່າຍ ແລະ ສຳເລັດການຈົດທະບຽນສັນຍາຈາກພາກສ່ວນທີ່ກ່ຽວຂ້ອງ (ຄ່າທຳນຽມໃນການຈົດທະບຽນສັນຍາຄວາມຮັບຜິດຊອບຂອງຜູ້ສະໜອງ)
   - <u>ງວດທີ2:</u> ຊຳລະ 70% ຂອງມູນຄ່າພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສຳເລັດ.
   - <u>ງວດທີ3:</u> ຊຳລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກຳນົດຄ້ຳປະກັນ (ໄລຍະຄ້ຳປະກັນຢ່າງໜ້ອຍ06 ເດືອນ)

ດັ່ງນັ້ນຈື່ງອອກແຈ້ງແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ,

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫລວງ

ສຸພັກ ຖິ່ນໄຊພອນ